**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ຫ້ອງການ

ເລກທີ...542...... /ຫກ

ນະຄອນຫຼວງວຽງຈັນ, ວັນທີ10..ກໍລະກົດ.......2023

# ແຈ້ງການ

ເຖິງ: ບັນດາ ຊາວໜຸ່ມ, ເຍົາວະຊົນລາວ ໃນຂອບເຂດທົ່ວປະເທດ.

**ເລື່ອງ: ເຊີນເຂົ້າຮ່ວມແຂ່ງຂັນລະຄອນເວທີ ພາຍໃຕ້ຫົວຂໍ້: "ທັກສະສີຂຽວຂອງຊາວໜຸ່ມ ເພື່ອຄວາມຍືນຍົງຂອງໂລກ"**

- ອີງໃສ່ ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ປີ 2021-2030;
- ອີງຕາມ ແຜນການຮ່ວມມືລະຫວ່າງ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ກັບ ອົງການ UNFPA ປະຈໍາປີ 2023;
- ອີງຕາມ ແຜນການຈັດກິດຈະກໍາສະເຫຼີມສະຫຼອງວັນໄວໜຸ່ມສາກົນ ປະຈໍາປີ 2023.

ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຮ່ວມກັບ ອົງການສະຫະປະຊາຊາດກອງທຶນສໍາລັບປະຊາກອນ UNFPA ໄດ້ຈັດກິດຈະກໍາແຂ່ງຂັນລະຄອນເວທີ **ພາຍໃຕ້ຫົວຂໍ້: "ທັກສະສີຂຽວຂອງຊາວໜຸ່ມ ເພື່ອຄວາມຍືນຍົງຂອງໂລກ"** ເພື່ອເປັນການສ້າງຂະບວນການສະເຫຼີມສະຫຼອງວັນໄວໜຸ່ມສາກົນ ປະຈໍາປີ 2023 ຈຸດປະສົງແມ່ນເປັນການເປີດໂອກາດໃຫ້ຊາວໜຸ່ມ, ເຍົາວະຊົນ ຜູ້ທີ່ມີພອນສະຫວັນທາງດ້ານການສະແດງລະຄອນ ໄດ້ສະແດງຄວາມກ້າຫານ, ຄວາມສາມາດ ພ້ອມທັງເປັນການປູກຈິດສໍານຶກໃຫ້ຊາວໜຸ່ມ, ເຍົາວະຊົນລາວບັນດາເຜົ່າ ໄດ້ຮູ້ຮັກທໍາມະຊາດ ແລະ ອານຸລັກຮັກສາສິ່ງແວດລ້ອມ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**1. ເງື່ອນໄຂການເຂົ້າຮ່ວມແຂ່ງຂັນ**

1) ຜູ້ເຂົ້າຮ່ວມການແຂ່ງຂັນ ແມ່ນຕ້ອງມີອາຍຸບໍ່ເກີນ 35 ປີ, ບໍ່ຈໍາກັດເພດ, ຊົນເຜົ່າ;

1) ການແຂ່ງຂັນແມ່ນ ທີມລະ 5-10 ຄົນ ແລະ ເນື້ອໃນຂອງເລື່ອງແມ່ນໃຫ້ຕິດພັນກັບຫົວຂໍ້ກິດຈະກໍາ ຄວາມຍາວບໍ່ເກີນ 5-10 ນາທີ;

2) ໃຫ້ສົ່ງລາຍຊື່, ເບີໂທລະສັບ, ຊື່ເລື່ອງ ແລະ ສົ່ງພາຍວີດີໂອການສະແດງ ໃຫ້ແກ່ຄະນະຮັບຜິດຊອບ ສົ່ງເຂົ້າອິນບ໋ອກ FB page: ປຶກສາບັນຫາໄວໜຸ່ມ ຫຼື ສົ່ງໂດຍກົງຢູ່ ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ບ້ານໂພນທັນ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ ຫຼື ໂທສອບຖາມຂໍ້ມູນຜ່ານທາງເບີໂທລະສັບສາຍດ່ວນໃຫ້ຄໍາປຶກສາແກ່ຊາວໜຸ່ມ-ເຍົາວະຊົນ 1554;
Whatsapp: 55300195, 55361055, 55132046

3) ເປີດຮັບສະໝັກແຕ່ວັນທີ 12 ກໍລະກົດ 2023 ແລະ ປິດຮັບສະໝັກວັນທີ 25 ກໍລະກົດ 2023

4) 27-31 ກໍລະກົດ 2023 ຈັດກອງປະຊຸມແນະນໍາ ແລະ ຝຶກອົບຮົມການຂຽນບົດ, ການສະແດງລະຄອນ;

5) ວັນທີ 5 ສິງຫາ 2023 ຈັດການແຂ່ງຂັນລະຄອນ ຮອບທີ 1 ແຂ່ງຂັນ ຈໍານວນ 10 ທີມ ຄັດເລືອກເອົາ 5 ທີມ ຜ່ານເຂົ້າຮອບທີ 2;

6) ວັນທີ 7 ສິງຫາ 2023 ຈັດການແຂ່ງຂັນລະຄອນເວທີ ຮອບທີ 2 ແຂ່ງຂັນ ຈຳນວນ 5 ທີມ ເພື່ອຄັດເລືອກເອົາທີມທີ່ຊະນະເລີດ, ຮອງຊະນະເລີດອັນດັບ1, ອັນດັບ 2;
7) ທີມຊະນະເລີດຈະໄດ້ສະແດງລະຄອນເວທີ ໃນພິທີເປີດງານສະເຫຼີມສະຫຼອງ ວັນໄວໜຸ່ມສາກົນ ແລະ ມອບລາງວັນຊະນະເລີດ ໃນວັນທີ11ສິງຫາ 2023 ທີ່ ສູນການຄ້າລາວໄອເຕັກ.

**2. ປະເພດລາງວັນ**

1) ລາງວັນທີ 1 ລາງວັນຊະນະເລີດ ອຸປະກອນການສຶກສາ ມູນຄ່າ 5.000.000 ກີບພ້ອມໃບຍ້ອງຍໍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
2) ລາງວັນທີ 2 ລາງວັນຮອງຊະນະເລີດ ອຸປະກອນການສຶກສາ ມູນຄ່າ 3.000.000 ກີບ ພ້ອມໃບຊົມເຊີຍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
3) ລາງວັນທີ 3 ລາງວັນຮອງຊະນະເລີດ ອຸປະກອນການສຶກສາ ມູນຄ່າ 2.000.000 ກີບ ພ້ອມໃບຊົມເຊີຍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
4) ລາງວັນທີ 4 ລາງວັນຊົມເຊີຍ ອຸປະກອນການສຶກສາ ມູນຄ່າ 1.000.000 ກີບ ພ້ອມໃບຊົມເຊີຍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ.

ໝາຍເຫດ: ຖ້າຫາກຊາວໜຸ່ມ-ເຍົາວະຊົນທີ່ຢູ່ຕ່າງແຂວງ ສົນໃຈໃນການສະໝັກເຂົ້າຮ່ວມແຂ່ງຂັນ ແມ່ນສາມາດສະໝັກໄດ້ ສຳລັບການເດີນທາງກິນຢູ່ພັກເຊົ່າຕະຫຼອດການເຄື່ອນໄຫວແມ່ນກຸ້ມຕົນເອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງຊາວໜຸ່ມ, ເຍົາວະຊົນລາວ ໃນຂອບເຂດທົ່ວປະເທດ ເພື່ອເຂົ້າຮ່ວມການແຂ່ງຂັນ.

ຮ.ຫົວໜ້າຫ້ອງການ

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຫ້ອງການ

ນ.ອຸໄລ ຈັນທະວົງ